ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກອງສະໜາມບິນລາວ

ເລກທີ 6034 /ກສລ

ນະຄອນຫລວງວຽງຈັນ, ວັນທີ 15 ຕຸລາ 2025

## ໜັງສືແຈ້ງເຊີນປະມູນ

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ເຂົ້າຍື່ນຊອງປະມູນ ວຽກຕັດເຄື່ອງແບບ ແລະ ເກີບ ໃຫ້ພະນັກງານກອງສະໜາມບິນລາວ ແລະ ສະໜາມບິນທົ່ວປະເທດ ປະຈໍາປີ 2025, ໄລຍະການປະຕິບັດແມ່ນ 60 ວັນ.
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບ ວຽກຕັດຫຍິບ;
4. ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດຊອບ: ທ່ານ ສອນມະນີ ໄພສະຫັວດ ໂທລະສັບ: 020 22219363 ແລະ ທ່ານ ນາງ ດາລີນ້າ ພົມມະຈັກ ໂທລະສັບ: 020 55002931 ໃນເວລາລັດຖະການ.
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ 07 ຕຸລາ 2025 ເປັນຕົ້ນໄປ, ໃນລາຄາ 3,000,000 ກີບ. ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
6. ຊອງປະມູນຕ້ອງສົ່ງຕາມທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ 14:00 ໂມງ ຂອງວັນທີ 21 ພະຈິກ 2025 ທີ່ຫ້ອງປະຊຸມເບີ 02 ກອງສະໜາມບິນລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:10 ນາທີ ຂອງວັນດຽວກັນ , ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.
7. ທຸກໆ ຊອງປະມູນຕ້ອງໄດ້ ມີໜັງສືຄໍ້າປະກັນການປະມູນເປັນເງິນສົດ ຫລື ແຊັກ (ວີຊ້າ) ບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ.
8. ທີ່ຢູ່: ກອງສະໜາມບິນລາວ, ໂທລະສັບ: 021 520542, ສໍານັກງານຕັ້ງຢູ່: ສະໜາມບິນສາກົນວັດໄຕ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.

ເຊັນແທນ ຫົວໜ້າກອງ

ຮອງຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກອງສະໜາມບິນລາວ

ສັກດາ ສຸຣິສັກ